**ຜູ້ໃຫ້ທຶນແກ່ໂຄງການປັບປຸງຊີວິດກາ ເປັ ຢູ່ ເພື່ອຄໍ້າປະກັ ດ້າ ສະບຽງອາຫານ ແລະ ໂພຊະ າກາ ເຂົ້າພົບ ປະ ແລະ ລາຍງານຜົນຂອງການປະເມີນ ໂຄງການໄລຍະກາງສະໄໝ**

ໂດຍ: ແສງອາລຸນ ພິລາຈັນ

ໃນວັນທີ 1 ເມສາ 2014 ຄະນະວິຊາການຮ່ວມຂອງທະນາຄານໂລກ ໄດ້ເຂົ້າພົບ ທ່ານ ບຸນເຮືອງ ດວງພະຈັນ, ລັດຖະມົນຕີປະຈໍາຫ້ອງວ່າການລັດຖະບານ, ຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບ ລ້າງຄວາມທຸກຍາກຂັ້ນສູນກາງ ເພື່ອປຶກສາຫາລື ແລະ ລາຍງານຜົນການປະເມີນຜົນ ໂຄງການ**ປັບປຸງຊີວິດກາ ເປັ ຢູ່ ເພື່ອຄໍ້າປະກັ ດ້າ** ສະບຽງອາຫານ ແລະ ໂພຊະ າກາ (ຄປພ) ຊຶ່ງການປະເມີນຜົນດັ່ງກ່າວໄດ້ດໍາເນີນມາເປັນເວລາ 5 ວັນ ນັບຕັ້ງແຕ່ວັນທີ 27 – 31 ມີນາ 2014 ຕະຫລອດໄລຍະຂອງການປະເມີນຜົນ ຜູ້ໃຫ້ທຶນໄດ້ເຮັດວຽກຮ່ວມກັບຄະນະວິຊາການຂອງ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມ ທຸກຍາກຂັ້ນສູນກາງ ແລະ ທລຍ/ຄປພ, ໄດ້ປຶກສາຫາລືແລກປ່ຽນຄໍາຄິດຄໍາເຫັນນໍາອໍານາດການປົກຄອງແຕ່ລະຂັ້ນ ພ້ອມທັງໄດ້ລົງໄປກວດກາເບິ່ງໂຄງການ, ລົງເລິກຕິດແທດ ແລະ ສໍາພາດພໍ່ແມ່ປະຊາຊົນຜູ້ທີ່ໄດ້ຮັບຜົນປະໂຫຍດໂຕຈິງຢູ່ 2 ແຂວງຄື: ຫົວພັນ ແລະ ສະຫວັນນະເຂດ ໂດຍສະເພາະ ຢູ່ເມືອງເຊໂປນ : ບ້ານ ສະແກງ, ບ້ານ ແກ້ງກວິ, ບ້ານ ວັງໄຮ ແລະ ບ້ານ ອາລັນ.

ໃນການພົບປະຄັ້ງນີ້ ທ່ານ ນາງ ເຄໂກະ ມິວະ, ຜູ້ຕາງທະນາຄານໂລກປະຈໍາ ສ.ປ.ປ. ລາວ ໃນນາມຕາງໜ້າໃຫ້ແກ່ບັນດາອົງການຜູ້ໃຫ້ທຶນ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສໍາເລັດ ຂອງການຈັດຕັ້ງປະຕິບັດວຽກງານ ທລຍ/ຄປພ ໃນໄລຍະເຄິ່ງສະໄໝ ຜ່ານມາ (2012-2014) ຊຶ່ງເຫັນວ່າມີຄວາມຄືບໜ້າຫລາຍ ແລະ ໄດ້ນໍາເອົາຜົນປະໂຫຍດໄປສູ່ພໍ່ແມ່ປະຊາຊົນໃນບ້ານເປົ້າໝາຍຂອງໂຄງ ການ ຕາມບຸລິມະສິດຄວາມຕ້ອງການຂອງເຂົາເຈົ້າຢ່າງແທ້ຈິງ ແລະ ຂໍຊົມເຊີຍໃນການຮ່ວມໄມ້ຮ່ວມມື ແລະ ການຕ້ອນຮັບອັນອົບອຸ່ນຂອງອໍານາດການປົກຄອງທຸກຂັ້ນລວມທັງຂັ້ນແຂວງ, ຂັ້ນເມືອງ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ໂດຍສະເພາະ ໃນການຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂອງ ທລຍ/ຄປພ ຢູ່ທ້ອງຖິ່ນຂອງຕົນຢ່າງມີຜົນສໍາເລັດ. ເຖິງແນວໃດກໍຕາມ ໃນໄລຍະທ້າຍສະໄໝຂອງໂຄງການນີ້ ຜູ້ໃຫ້ທຶນຍັງໄດ້ສະເໜີປັບປຸງການຈັດປະຕິບັດວຽກງານຂອງ ຄປພ ບາງດ້ານ ເປັນຕົ້ນແມ່ນເອົາໃຈໃສ່ດ້ານການໂຄສະນາເຜີຍແຜ່ຂໍ້ມູນ-ຂ່າວສານ ກ່ຽວກັບການປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການໃຫ້ມີລັກສະນະຫລາກຫລາຍກວ່າເກົ່າ. ນອກນັ້ນ ໃຫ້ປະສານສົມທົບກັບ ທລຍ ໃນການຈັດຕັ້ງປະຕິບັດໃຫ້ໄດ້ດີ ພ້ອມທັງເພີ້ມການສ້າງຄວາມເຂັ້ມແຂງໃຫ້ແກ່ທີມງານຂັ້ນເມືອງ ເພາະເຂົາເຈົ້າເປັນພະນັກງານທີ່ໜຸ່ມນ້ອຍຍັງຂາດປະສົບການ,ເພື່ອເຮັດແນວໃດໃຫ້ເຂົາເຈົ້ານໍາເອົາຄວາມຮູ້ໄປຜັນຂະຫຍາຍຕໍ່ຊຸມຊົນໃຫ້ມີຄວາມເຂົ້າໃຈເລິກເຊິ່ງກວ່າເກົ່າ.

ທ່ານ ນາງ ເຄໂກະ ມິວະ ຍັງກ່າວຕື່ມວ່າ ພວກຂ້າພະເຈົ້າເຊື່ອແນ່ວ່າວຽກງານ ທລຍ/ຄປພ ໄດ້ເປັນສ່ວນໜຶ່ງທີ່ສໍາຄັນໃນການສະໜັບສະໜູນນະໂຍບາຍຂອງລັດຖະບານ ໂດຍສະເພາະວຽກງານການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເພື່ອເຮັດແນວໃດໃຫ້ບ້ານມີຄວາມເຂັ້ມແຂງ ເປັນເຈົ້າການພັດທະນາບ້ານຂອງເຂົາເຈົ້າດ້ວຍໂຕເຂົາເຈົ້າເອງ ແລະ ພວກຂ້າພະເຈົ້າຫວັງຢ່າງຍິ່ງວ່າ ລັດຖະບານແຫ່ງ ສ ປ ປ ລາວ ຈະນໍາເອົາບົດຮຽນຂອງ ທລຍ/ຄປພ ເຂົ້າໃນການຈັດຕັ້ງປະຕິບັດວຽກງານ 3 ສ້າງໃນຕໍ່ໜ້າ ໃຫ້ໄດ້ຮັບຜົນສໍາເລັດ ແລະ ກ້າວໜ້າ”.

ຈາກນັ້ນ ທ່ານ ບຸນເຮືອງ ດວງພະຈັນ, ລັດຖະມົນຕີປະຈໍາຫ້ອງວ່າການລັດຖະບານ, ຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ໄດ້ກ່າວວ່າ: “ໂຄງກາ ປັບປຸງຊີວິດກາ ເປັ ຢູ່ເພື່ອຄໍ້າປະກັ ດ້າ ໂພສະ າກາ ໄດ້ຮັບກາ ຊ່ວຍເຫຼືອຈາກໂຄງກາ ພັດທະ າສັງຄົມຂອງປະເທດຍີ່ປຸ່ ໂດຍຜ່າ ທະ າຄາ ໂລກ ປະມາ 2.6 ລ້າ ໂດລາສະຫະລັດ ແລະ ໄດ້ຖືກຈັດຕັ້ງປະຕິບັດທົດລອງໃ 5 ບ້າ ຂອງ 2 ແຂວງຄື : ແຂວງຫົວພັ ແລະ ແຂວງສະຫັວ ະເຂດ,ໄລຍະທົດລອງຈະໄດ້ດໍາເ ົ ເປັ ເວລາປະມາ 4 ປີ ເລີ່ມແຕ່ປີ (2012-2015).

ໂຄງກາ ດັ່ງກ່າວແມ່ ໂຄງກາ ທີ່ໄດ້ປະຕິບັດສືບເນື່ອງຈາກໂຄງການ ທລຍ 1 ແລະ ໃຫ້ສອດຄອງກັບ ທລຍ 2 ທີ່ເລັ່ງໃສ່ກາ ສົ່ງເສີມຊຸມຊົ ໃຫ້ໄດ້ ໍາໃຊ້ພື້ ຖາ ໂຄງຮ່າງທີ່ ທລຍ ໃຫ້ການສະໜັບສະໜູນຢ່າງທົ່ວເຖິງ ສ່ວນໂຄງກາ ປັບປຸງຊີວິດກາ ເປັ ຢູ່ ເພື່ອຄໍ້າປະກັ ດ້າ ໂພສະ າກາ ແມ່ ເໜັ້ນໃສ່ກາ ປັບປຸ່ງຊີວິດກາ ເປັ ຢູ່ ແລະ ກາ ບໍລິໂພກອາຫາ ທີ່ຄົບທາດຕ່າງໆທີ່ຮ່າງກາຍຂອງຄົ ເຮົາຕ້ອງກາ ໂດຍສະເພາະແມ່ ການຮັກສາສຸຂະພາບ ແລະ ການເບິ່ງແຍງດູແລຂອງແມ່ຍິງໃວຈະເລີ ພັ ແລະ ເດັກ ້ອຍ ແລະ ເດັກໄວຮຽ ທີ່ຢູ່ໃນໄວຈະເລີນເຕີບໂຕ.

ຮູບແບບກາ ດໍາເ ົ ໂຄງກາ ແມ່ ໍາໃຊ້ຮູບແບບ ແລະ ວິທີກາ ພັດທະ າທີ່ຂັບເຄື່ອນໂດຍຊຸມຊົ ເອງ ເຊິ່ງແມ່ນກາ ພັດທະ າທີ່ມາຈາກຄວາມຕ້ອງກາ ແລະ ການມີສ່ວ ຮ່ວມຂອງປະຊາຊົ ແລະ ເພື່ອຜົ ປະໂຫຍດປະຊາຊົ ເອງ. ເຊິ່ງຮູບແບບນີ້ແມ່ ກາ ມອບສິດໃຫ້ແກ່ພໍ່ແມ່ປະຊາຊົນ ຢູ່ຂັ້ນທ້ອງຖິ່ນເປັນຕົ້ນແມ່ນແມ່ຍິງ ແລະ ຜູ້ດ້ອຍໂອກາດໄດ້ມີສ່ວ ຮ່ວມໃ ກາ ຈັດຕັ້ງປະຕິບັດໂຄງກາ ເຊັ່ນ: ກາ ສ້າງກຸ່ມຊ່ວຍເຫຼືອເຊິ່ງກັ ແລະ ກັ , ຮູບແບບນີ້ເປັ ຮູບແບບກາ ພັດທະ າທີ່ບໍ່ຄືໃຜ ແລະ ແມ່ ກາ ວາງແຜ ທີ່ສອດຄອງກັບທິດທາງນະໂຍບາຍຂອງພັກ ແລະ ລັດຖະບາ ຂອງ ສ ປ ປ ລາວ ເພື່ອແ ໃສ່ສ້າງບາດກ້າວບຸກທະລຸໃ ກາ ແກ້ໄຂຄວາມທຸກຍາກໃຫ້ໄດ້ຕາມຄາດໝາຍ, ບັ ລຸເປົ້າໝາຍສະຫັດສະຫວັດດ້າ ກາ ພັດທະ າ ໃ ປີ 2015, ສ້າງພື້ນຖານອັ ໜັກແໜ້ ໃຫ້ແກ່ກາ ໍາເອົາປະເທດຊາດຫລຸດພົ້ ອອກຈາກສະຖາ ະພາບຂອງປະເທດດ້ອຍພັດທະ າ ໃ ປີ 2020”.

ໃນຕອນທ້າຍ ທ່ານ ບຸນເຮືອງ ດວງພະຈັນ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສໍາເລັດໃນການມາປະເມີນຜົນຂອງວິຊາການຮ່ວມຂອງທະນາຄານໂລກ ໃນຄັ້ງນີ້ ພ້ອມທັງໃຫ້ທັດສະນະວ່າ: ຜ່ານການຊ່ວຍເຫລືອຂອງພວກທ່ານເຮັດໃຫ້ແກ່ ທລຍ/ຄປພ ໄດ້ບັນລຸຈຸດປະສົງຄື: ເຮັດໃຫ້ພໍ່ແມ່ປະຊາຊົນຂອງພວກຂ້າພະເຈົ້າສາມາດ ກຸ້ມຕົນເອງເພິ່ງຕົນເອງໄດ້ ຮູ້ຈັກຊ່ວຍເຫລືອ ເຊິ່ງກັນ ແລະ ກັນ, ມີຊີວິດການເປັນຢູ່ທີ່ດີຂຶ້ນ ເປັນຕົ້ນແມ່ນມີລາຍຮັບຈາກກິດຈະກໍາຂອງໂຄງການເຊັ່ນ: ການຕໍ່າຫູກທໍໄໝ, ການປູກຝັງລ້ຽງສັດ, ນອກຈາກນັ້ນ ຍັງໄດ້ຄວາມຮູ້ກ່ຽວກັບວຽກງານໂພຊະນາການ ໂດຍສະເພາະແມ່ນການເບິ່ງແຍງດູແລລູກ, ການຮັກສາສຸຂະພາບຂັ້ນຕົ້ນ, ສຸຂະອະນາໄມ ແລະ ການປຸງແຕ່ງອາຫານສໍາລັບເກັບຮັກສາໄວ້ບໍລິໂພກໃນເວລາຈໍາເປັນ ແລະ ຂາດແຄນ. ອັນນີ້ແມ່ນຜົນງານທີ່ໜ້າເພິ່ງພໍໃຈ ແລະ ຊົມເຊີຍ. ຂ້າພະເຈົ້າຫວັງວ່າພວກທ່ານຈະສືບຕໍ່ໃຫ້ການສະໜັບສະໜູນຊ່ວຍເຫລືອພວກຂ້າພະເຈົ້າຕື່ມເພາະຍັງມີປະຊາຊົນຈໍານວນຫລວງຫລາຍບໍ່ທັນມີລາຍຮັບ ແລະ ທຸກຍາກໃນ ສ.ປ.ປ ລາວ“.